## ການຄຸ້ມຄອງ ແຜນງານ ຂອງຂະແໜງການ

### ຄວາມເປັນມາ

ໃນປັດຈຸບັນນີ້, ແຜນການ ການພັດທະນາ ແຫ່ງຊາດ ຂອງ ສປປ ລາວ ມີຊື່ວ່າ ແຜນພັດທະນາ ເສດຖະກິດ ສັງຄົມ ແຫ່ງຊາດ 2006-2010 (NSEDP 2006-2010). ແຜນດັ່ງກ່າວປະກອບດ້ວຍ ແຜນພັດທະນາ ໂຄງຮ່າງ ການປົກຄອງ ຈາກບ້ານ, ເມືອງ, ແຂວງ ແລະ ຮອດຂັ້ນ ລະດັບຊາດ ໂດຍ ຜ່ານວິທີການແບບມີສ່ວນຮ່ວມ. ແຜນງານ ການລົງທຶນ ແຫ່ງລັດ (PIP) ແມ່ນໄດ້ຖືວ່າ ເປັນເຄື່ອງມື ເພື່ອ ສຳເລັດເປົ້າໝາຍ ໃນແຜນພັດທະນາ ຂອງແຕ່ລະຂັ້ນການປົກຄອງ. ພີແຄັບ1 ໄດ້ນຳສະເໜີ ເຄື່ອງມື ການບໍລິຫານ ນະໂຍບາຍ ເຊັ່ນ ເຄືອຈຸດປະສົງແຜນງານ, ຕາຕະລາງ ໂຄງໂນໂລຊີ ແລະ ແຜນທີ່ PIP ສຳລັບ ການຈັດຕັ້ງ ແລະ ການຕິດຕາມກວດກາ ເອກະສານ **ນະໂຍບາຍ ທີ່ໄປຕາມຈຸດປະສົງ**.

| ເຄືອຈຸດປະສົງ ແຜນງານ ຂອງ ແຂວງ ອຸດົມໄຊ | ແຜນທີ່ PIP ຂອງ ແຂວງ ສາລະວັນ |
|---|---|






### ບັນດາກິດຈະກຳ ຕົ້ນຕໍ ແລະ ໝາກຜົນ

ການຄຸ້ມຄອງ ແຜນງານ ຂອງ ພີແຄັບ2 ມີຈຸດປະສົງ ເພື່ອສະເໜີ ບັນດາວິທີການ ກ່ຽວກັບ ການກະກຽມ ເຄື່ອງມື ການຄຸ້ມຄອງ ນະໂຍບາຍ ໂດຍຜ່ານກໍລະນີສຶກສາ ໃນແຜນພັດທະນາປັດຈຸບັນ ໃນບັນດາແຂວງ ທົດລອງ ແລະ ຂະແໜງການຕົວແບບ. ຢ່າງໃດກໍ່ຕາມ, ພວກເຮົາເຫັນໄດ້ວ່າການນຳໃຊ້ບາງຢ່າງສາມາດເຮັດໃຫ້ ຫຼັກສູດການຝຶກອົບຮົມ ເໝາະກັບຄວາມເປັນຈິງໄດ້ຫຼາຍຂຶ້ນ ແລະ ສະໜອງທິດທາງ ສຳລັບພະນັກງານ ບໍລິຫານ ທາງດ້ານ ການບໍລິການຢ່າງຫ້າວຫັນ. ບັນດາເອກະສານນະໂຍບາຍ ຂອງແຜນພັດທະນາ ເສດຖະກິດ ສັງຄົມໃນປັດຈຸບັນ ບໍ່ມີຄວາມຈຳເປັນຕ້ອງວາງໂຄງຮ່າງ ແບບໂລຊິກ ແລະ ມີຄວາມ ຈຳເປັນທີ່ຕ້ອງປັບປຸງ ໃນສ່ວນໃດສ່ວນໜຶ່ງ ຄືດັ່ງຕໍ່ໄປນີ້:

1) ເຄື່ອງມື ເພື່ອບັນລຸເປົ້າໝາຍ ກ່ຽວກັບຫົວຂໍ້ທີ່ກວມເອົາທຸກປະເດັນ ເຊັ່ນ ການປົກປັກຮັກສາ ສິ່ງແວດລ້ອມ ແລະ ການຫຼຸດຜ່ອນ ຄວາມທຸກຈົນ ໂດຍເລື້ອຍໆ ບໍ່ໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງ, ຍ້ອນວ່າ ບັນດາແຜນພັດທະນາ ໄດ້ຖືກວາງຮ່າງໂດຍຂະແໜງການ.
2) ພື້ນທີ່ບູລິມະສິດ ແມ່ນບາງເທື່ອ ບໍ່ໄດ້ມີການກຳນົດ ລະຫວ່າງເມືອງຕ່າງໆພາຍໃນແຂວງ. ເມືອງຕ້ອງໄດ້ ເອົາໃຈໃສ່ຕື່ມອີກ ໃນການອັດຊ່ອງວ່າງລະຫວ່າງ ບັນດາຕົວຊີ້ວັດທີ່ໄດ້ວາງເປົ້າໝາຍໄວ້ ແລະ ສະພາບຕົວຈິງ.
3) ຮູບພາບ ການພັດທະນາ ໃນແຜນ ມີບາງເທື່ອ ບໍ່ມີໂລຊິກ ຍ້ອນຄວາມບໍ່ສອດຄ່ອງ ໃນການ ນຳໃຊ້ຄຳສັບທາງດ້ານວິຊາການ ເຊັ່ນ ໂຄງການ, ກິດຈະກຳ, ເປົ້າໝາຍ ແລະ ຈຸດປະສົງ.
4) ຫຼາຍບັນດາຕົວຊີ້ວັດເປົ້າໝາຍ ແມ່ນໄດ້ສະແດງທາງດ້ານຄຸນະພາບ ໃນລັກສະນະການບັນລະຍາຍເທົ່ານັ້ນ. ດັ່ງນັ້ນ ໂດຍເລື້ອຍໆ ແລ້ວມັນມີຄວາມຫຍຸ້ງຍາກ ໃນການຕິດຕາມກວດດາ ຄວາມຄືບໜ້າ ຂອງແຜນ ການທາງດ້ານປະລິມານ.
5) ບາງເທື່ອ ແຜນພັດທະນາ ເສດຖະກິດ ສັງຄົມ ແຂວງ ແລະ ແຜນພັດທະນາ ຂອງຂະແໜງການ ແຂວງ ມີຄວາມຂັດແຍ້ງ ເຊິ່ງກັນ ແລະ ກັນ ໂດບການກ່າວເຖິງ ເປົ້າໝາຍທີ່ແຕກຕ່າງກັນ ພາຍໃນຂະແໜງດຽວກັນ ແລະ ແຂວງດຽວກັນ.
6) ແຕ່ລະ ເປົ້າໝາຍການພັດທະນາ ຕ້ອງມີ ໂຄງການ PIP ເພື່ອເຮັດໃຫ້ມັນບັນລຸ ເປົ້າໝາຍ ການພັດທະນາດັ່ງກ່າວ. ຢ່າງໃດກໍ່ຕາມ ບໍ່ມີລາຍຊື່ໂຄງການໃດເລີຍ ພາຍໃຕ້ ເປົ້າໝາຍ ການພັດທະນານັ້ນ. .

- **ກິດຈະກຳຕ່າງໆ ໃນອະນາຄົດ**

ອີງໃສ່ ບົດຮຽນທີ່ຖອດຖອນໄດ້ ຈາກກຳລະນີສຶກສາຕ່າງໆ, ພີແລັບ2 ໄດ້ຝຶກອົບຮົມ ໃນລັກສະນະພາກປະຕິບັດ ຕາມແຕ່ລະຂະແໜງ ໃນທຸກໆ ແຂວງ ແລະ ກະຊວງ. ວາລະການຝຶກອົບຮົມ ໄດ້ເປີດໂອກາດ ໃຫ້ຜູ້ເຂົ້າຮ່ວມ ຝຶກຫັດ ການກະກຽມ ເຄື່ອງມື ການຄຸ້ມຄອງ ແຜນງານ, ຊອກຫາ ບັນຫາຕ່າງໆ ທີ່ມີ ໃນແຜນພັດທະນາປັດຈຸບັນ, ແລະ ໃຫ້ຄຳແນະນຳ ສຳລັບ ແຜນພັດທະນາ ຕໍ່ໜ້າສຳລັບຂະແໜງການຕ່າງໆ. ການຝຶກອົບຮົມນີ້ ມີເປົ້າໝາຍ ເພື່ອປັບປຸງ ຢ່າງມີ ໂລຊິກ ແລະ ມີໂຄງສ້າງ ທາງດ້ານເນື້ອໃນ ແຜນພັດທະນາ ເສດຖະກິດ ສັງຄົມ 5 ປີ ຕໍ່ໜ້າ 2011-2015 ທີ່ປັດຈຸບັນກຳລັງມີການຮ່າງຂຶ້ນ. ນອກເໜືອຈາກນີ້, ການຝຶກອົບຮົມ ແມ່ນຄາດໄວ້ວ່າ ຈະຍົກລະດັບ ຄວາມສາມາດ ຂອງພະນັກງານ ບໍລິຫານ ໃນສາຂາການວິເຄາະ ນະໂຍບາຍ.